ທະນາຄານຮ່ວມພັດທະນາ

# ຂໍ້ກຳນົດ ແລະ ເງື່ອນໄຂການໃຊ້ບໍລິການ JDB FIRST (i-Banking)

ຂໍ້ກຳນົດສະບັບນີ້ ໄດ້ເຮັດຂຶ້ນ ລະຫວ່າງ ທະນາຄານຮ່ວມພັດທະນາ ຈຳກັດ ແລະ ລູກຄ້າຜູ້ທີ່ໄດ້ຮັບການອະນຸມັດໃຫ້ນຳໃຊ້ບໍລິການ JDB FIRST ເທົ່ານັ້ນ.

1. ຜູ້ທີ່ນຳໃຊ້ບໍລິການ JDB FIRST ຕ້ອງມີອາຍຸຫຼາຍກວ່າ 15 ປີຂຶ້ນໄປ.
2. ຜູ້ສະໝັກນຳໃຊ້ JDB FIRST ຕ້ອງມີບັນຊີເງິນຝາກປະຢັດ, ບັນຊີເງິນຝາກປະຈຳ, ບັນຊີກະແສລາຍວັນ, ບັດເດບິດ ຫຼື ບັດເຄດິດ ທີ່ມີບັນຊີເງິນຝາກປະຢັດ ຫຼື ບັນຊີກະແສລາຍວັນ ຫຼື ບັນຊີເງິນຝາກປະຈຳ.
3. JDB First ເປັນການບໍລິການທາງການເງິນ ທີ່ຊ່ວຍໃຫ້ລູກຄ້າສາມາດເຮັດທຸລະກຳທາງດ້ານການເງິນດ້ວຍຕົນເອງ ຜ່ານທາງລະບົບ Internet ໄດ້ຕະຫຼອດ 24 ຊົ່ວໂມງ. ຜູ້ໃຊ້ບໍລິການສາມາດໂອນເງິນຈາກບັນຊີຜູ້ໃຊ້ໄປບັນຊີອື່ນໄດ້ຕາມຈຳນວນທີ່ທະນາຄານກຳນົດ ແລະ ສາມາດຊຳລະຄ່າສິນຄ້າ ຫຼື ຄ່າບໍລິການສາທາລະນຸປະໂພກຕ່າງໆ. ນອກຈາກນັ້ນ, ຍັງສາມາດກວດເບິ່ງລາຍການເຄື່ອນໄຫວບັນຊີຂອງຕົນເອງໄດ້ອີກດ້ວຍ.
4. ຜູ້ໃຊ້ບໍລິການ JDB First ສາມາດເປີດບັນຊີເງິນຝາກປະຈຳດ້ວຍຕົນເອງຜ່ານລະບົບ Internet Banking ໄດ້ໂດຍມີເງື່ອນໄຂດັ່ງຕໍ່ໄປນີ້:

   4.1 ຈຳນວນເງິນທີ່ເປີດບັນຊີເງິນຝາກປະຈຳ ຈະມາຈາກການໂອນເງິນຈາກບັນຊີເງິນຝາກປະຢັດ ຫຼື ບັນຊີກະແສລາຍວັນ ທີ່ຜູ້ໃຊ້ບໍລິການໄດ້ສະໝັກໃຊ້ບໍລິການ JDB First ເທົ່ານັ້ນ.

   4.2 ຂໍ້ມູນ ພ້ອມທັງເງື່ອນໄຂການເບີກຖອນຂອງບັນຊີເງິນຝາກປະຈຳ ແມ່ນຈະເປັນຂໍ້ມູນດຽວກັນກັບບັນຊີຝາກປະຢັດ ຫຼື ກະແສລາຍວັນ ທີ່ຜູ້ໃຊ້ບໍລິການສະໝັກນຳໃຊ້ JDB First.

   4.3 ຜູ້ໃຊ້ບໍລິການສາມາດເລືອກໄລຍະເວລາໃນການຝາກປະຈຳ ແລະ ເງື່ອນໄຂການຮັບອັດຕາດອກເບ້ຍໄດ້ໃນລະບົບ Internet Banking.

   4.4 ຜູ້ໃຊ້ບໍລິການສາມາດມາຮັບເອົາປື້ມບັນຊີເງິນຝາກປະຈຳ ຫຼື ບໍ່ຮັບກໍໄດ້ ຖ້າຫາກຕ້ອງການຮັບປື້ມບັນຊີເງິນຝາກ ເຈົ້າຂອງບັນຊີທີ່ເປີດບັນຊີທາງ Internet Banking ກໍສາມາດນຳເອົາລາຍລະອຽດ User ID ຂອງ Internet Banking ແລະ ຂໍ້ມູນໃນ Customer ID ມາຢັ້ງຢືນ ເພື່ອຮັບປື້ມບັນຊີໄດ້ທີ່ສູນບໍລິການ, ສາຂາ ຫຼື ໜ່ວຍບໍລິການທະນາຄານຮ່ວມພັດທະນາ ບ່ອນທີ່ຕົນສະໝັກນຳໃຊ້ບໍລິການ JDB First.

   4.5 ຫາກບໍ່ຕ້ອງການຮັບປື້ມບັນຊີເງິນຝາກປະຈຳ ເມື່ອຄົບກຳນົດໄລຍະເວລາຝາກ ບັນຊີເງິນຝາກປະຈຳຂອງລູກຄ້າຈະປິດແບບອັດຕະໂນມັດ ໂດຍຕົ້ນທຶນພ້ອມດອກເບ້ຍ ລະບົບຈະໂອນເງິນເຂົ້າບັນຊີຝາກປະຢັດ ຫຼື ກະແສລາຍວັນ ທີ່ລູກຄ້າໄດ້ຜູກໄວ້ໃນຕອນຕົ້ນທີ່ເປີດບັນຊີເງິນຝາກປະຈຳ.

   4.6 ຖ້າຜູ້ນຳໃຊ້ບໍລິການຕ້ອງການປິດບັນຊີເງິນຝາກປະຈຳກ່ອນກຳນົດ ຕ້ອງໄດ້ປະກອບເອກະສານຂໍປິດບັນຊີໄດ້ຢູ່ສູນບໍລິການ, ສາຂາ ຫຼື ໜ່ວຍບໍລິການທີ່ລູກຄ້າເປີດບັນຊີເພື່ອນຳໃຊ້ JDB First.
5. ຜູ້ໃຊ້ບໍລິການ ຫຼັງໄດ້ຮັບລະຫັດ (PIN) ຈາກທະນາຄານຮ່ວມພັດທະນາ ຕ້ອງປ່ຽນໃຊ້ລະຫັດໃໝ່. ຂະບວນການນີ້ຈະເກີດຂຶ້ນອັດຕະໂນມັດ ໃນການເຂົ້າສູ່ລະບົບຄັ້ງທຳອິດ ແລະ ລະບົບຈະຂໍໃຫ້ປ່ຽນລະຫັດໃໝ່.
6. ID ຜູ້ໃຊ້ບໍລິການ, ລະຫັດເຂົ້າລະບົບ ແລະ ຄຳຖາມຄວາມປອດໄພ, ຜູ້ໃຊ້ບໍລິການ ຄວນເກັບໄວ້ເປັນຄວາມລັບ ໃນກໍລະນີທີ່ຜູ້ໃຊ້ບໍລິການລືມລະຫັດ ຫຼື ຂໍ້ມູນການນຳໃຊ້, ຜູ້ໃຊ້ບໍລິການສາມາດຕິດຕໍ່ທີມງານຂອງທະນາຄານຮ່ວມພັດທະນາ (JDB 1499) ເພື່ອຍົກເລີກລະຫັດໃຊ້ເກົ່າ, ສຳລັບການຂໍລະຫັດໃໝ່ຈະເຮັດໄດ້ໃນມື້ເຮັດວຽກເທົ່ານັ້ນ.
7. ທຸລະກຳທີ່ຕ້ອງໄດ້ເພີ່ມ ຫຼື ປ່ຽນແປງບັນຊີ, ລູກຄ້າຕ້ອງໄດ້ເຂົ້າມາພົບພັນກັບໜ່ວຍບໍລິການຂອງທະນະຄານຮ່ວມພັດທະນາ (JDB) ໂດຍຖືບັດປະຈຳຕົວ ແລະ ປື້ມບັນຊີເງິນຝາກເພື່ອເປັນເອກະສານຢັ້ງຢືນ.
8. ທະນາຄານຮ່ວມພັດທະນາ (JDB) ເປັນຜູ້ຖືກຳມະສິດໃນການປ່ຽນແປງຂໍ້ກຳນົດນີ້ທັງໝົດ, ຕາມທະນາຄານເຫັນວ່າເໝາະສົມ, ທະນາຄານຮ່ວມພັດທະນາ (JDB) ມີສິດໃນການຢຸດໃຫ້ບໍລິການທັງໝົດ ຫຼື ໃຫ້ບໍລິການບາງສ່ວນ ຫຼື ໃຫ້ບໍລິການລູກຄ້າສະເພາະກຸ່ມ, ໂດຍມີການແຈ້ງເຕືອນລ່ວງໜ້າ.
9. ຜູ້ໃຊ້ບໍລິການຍິນຍອມທີ່ຈະຈ່າຍຄ່າບໍລິການຂອງ JDB First Service Mobile/Web application ແລະ ຄ່າທຳນຽມຕ່າງໆທີ່ທະນາຄານຮ່ວມພັດທະນາ (JDB) ປະກາດໃຊ້ແຕ່ລະໄລຍະ, ທະນາຄານຮ່ວມພັດທະນາ (JDB) ມີສິດໃນການປ່ຽນຄ່າບໍລິການທຸກເວລາຕາມຄວາມເໝາະສົມ ໂດຍມີການແຈ້ງເຕືອນລ່ວງໜ້າ. ຜູ້ໃຊ້ບໍລິການຍິນຍອມໃຫ້ທະນາຄານຮ່ວມພັດທະນາ (JDB) ຫັກຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກບັນຊີທີ່ຜູ້ໃຊ້ບໍລິການມີໄວ້ກັບທະນາຄານຮ່ວມພັດທະນາ (JDB).
10. ຖ້າມີການຮ້ອງຂໍທາງກົດໝາຍ, ເຈົ້າໜ້າທີ່ຂອງລັດທີ່ຮັບຜິດຊອບ ຫຼື ນະໂຍບາຍຂອງທະນາຄານຮ່ວມພັດທະນາ (JDB) ໃນການກວດສອບການເຄື່ອນໄຫວບັນຊີ ຫຼື ບໍລິການທີ່ກ່ຽວຂ້ອງກັບຜູ້ໃຊ້ບໍລິການ, ຜູ້ໃຊ້ບໍລິການຍິນຍອມໃຫ້ຜູ້ໄດ້ຮັບມອບອຳນາດໃນການກວດສອບ ຂອງທະນາຄານຮ່ວມພັດທະນາ (JDB) ມີສິດໃນການກວດສອບລາຍງານຂໍ້ມູນ ຫຼື ການເຄື່ອນໄຫວບັນຊີທັງໝົດ.
11. ສຳລັບຜູ້ໃຊ້ບໍລິການທີ່ລົງທະບຽນ SMS Alert ທະນາຄານຈະສົ່ງຂໍ້ຄວາມແຈ້ງເຕືອນທຸກຄັ້ງເມື່ອມີລາຍການເຄື່ອນໄຫວໃນບັນຊີຂອງທ່ານ.
12. ບັນດາຊົ່ວໂມງທີ່ລະບົບຢຸດດຳເນີນການ ຫຼື ສະຫຼຸບປະມວນຜົນ (ເວລາ cut-off) ອາດຈະຖືກແຈ້ງປະຕິເສດໃນການດຳເນີນການ ຫຼື ຖືກດຳເນີນການໃນວັນລັດຖະການຖັດໄປໂດຍອັດຕະໂນມັດ.

13. ລະບົບບໍ່ຮອງຮັບຕົວພິມພາສາລາວໃນການປ້ອນຂໍ້ມູນເຂົ້າລະບົບ.
14. ທ່ານຜູ້ໃຊ້ບໍລິການທີ່ລົງທະບຽນຕ້ອງສະໜອງຂໍ້ມູນໃນຟອມສະໝັກ ລວມທັງລາຍເຊັນຄົບຕາມເງື່ອນໄຂໃນບັນຊີ ແລະ ທ່ານຜູ້ໃຊ້ບໍລິການທີ່ລົງທະບຽນ ຕ້ອງສະໜອງຂໍ້ມູນໃນຟອມສະໝັກ ລວມທັງລາຍເຊັນຄົບຕາມເງື່ອນໄຂໃນບັນຊີ ແລະ ເອກະສານປະກອບໃຫ້ຖືກຕ້ອງ. ກໍລະນີລູກຄ້າບຸກຄົນ ຫຼື ນິຕິບຸກຄົນທີ່ບໍ່ແມ່ນເຈົ້າຂອງບັນຊີມາລົງທະບຽນເອງຕ້ອງຂຽນໃບມອບສິດໃຫ້ກັບບຸກຄົນຕາງໜ້າມາລົງທະບຽນແທນ.
15. ຖ້າມີການເຊັນຮ່ວມ 2 ລາຍເຊັນຂຶ້ນໄປ, ຕ້ອງພ້ອມກັນເຊັນລົງໃນຟອມສະໝັກນຳໃຊ້ບໍລິການ JDB First ຈຶ່ງສາມາດເປີດບໍລິການນຳໃຊ້ໄດ້.
16. ພາຍຫຼັງໄດ້ຮັບຊອງລະຫັດລັບຈາກທະນາຄານ, ຜູ້ໃຊ້ບໍລິການຕ້ອງນຳ User ແລະ Password ທີ່ໄດ້ຮັບມາ Login ເຂົ້ານຳໃຊ້ລະບົບ JDB First ພ້ອມທັງປ່ຽນ Password ໃໝ່ (ຕາມຄູ່ມືທີ່ທະນາຄານໄດ້ປະກອບໃຫ້).
17. ຜູ້ໃຊ້ບໍລິການຕ້ອງປະຕິບັດຕາມຂັ້ນຕອນຄູ່ມືການນຳໃຊ້, ຄຳແນະນຳ ແລະ ກົດລະບຽບຕ່າງໆຂອງທະນາຄານ.
18. ກໍລະນີພົບຂໍ້ສົງໄສຜິດປົກກະຕິກ່ຽວກັບທຸລະກຳການເງິນໃນບັນຊີ ຕ້ອງແຈ້ງທະນາຄານທັນທີເພື່ອກວດສອບ.
19. ຜູ້ໃຊ້ບໍລິການຍອມຮັບ ແລະ ຮັບຮູ້ການປ່ຽນແປງດ້ານເງື່ອນໄຂ, ວົງເງິນສູງສຸດໃນການໂອນຕໍ່ມື້ ແລະ ອັດຕາຄ່າທຳນຽມຕ່າງໆ ຕາມລະບຽບຂອງທະນາຄານທີ່ໄດ້ປ່ຽນແປງແຕ່ລະໄລຍະ.
20. ກ່ອນການເຮັດລາຍການທຸລະກຳການເງິນ ຜູ້ໃຊ້ບໍລິການຕ້ອງຮັບປະກັນວ່າຍອດເຫຼືອໃນບັນຊີຂອງທ່ານພຽງພໍໃນການເຮັດທຸລະກຳ ແລະ ຄ່າທຳນຽມຕ່າງໆຕາມລະບຽບຂອງ ທະນາຄານຮ່ວມພັດທະນາ.
21. ການຊຳລະສະສາງຄ່າສາທາລະນຸປະໂພກ ຫຼື ຜະລິດຕະພັນອື່ນໆ ຂອງທະນາຄານຮ່ວມພັດທະນາ ຜ່ານ JDB First ຜູ້ໃຊ້ບໍລິການຕ້ອງໃຊ້ຄູ່ມືແນະນຳ, ລົງທະບຽນເຂົ້ານຳໃຊ້ບໍລິສັດຜູ້ໃຫ້ບໍລິການ ແລະ ຂໍ້ມູນຜູ້ຊຳລະໃຫ້ຖືກຕ້ອງ. ໃນກໍລະນີຊຳລະຜິດພາດໃຫ້ພົວພັນນຳທະນາຄານທັນທີ.
22. ຜູ້ໃຊ້ບໍລິການຕ້ອງລັອກອິນເຂົ້າລະບົບຜ່ານເວັບໄຊ ຫຼື ຊ່ອງທາງ Mobile Application ຂອງທະນາຄານເທົ່ານັ້ນ (ໝາຍເຫດ: Mobile Application ໃຊ້ໄດ້ສະເພາະລະບົບ IOS ແລະ Android ສ່ວນ Mobile ຫຼື Tablet ທີ່ບໍ່ໄດ້ໃຊ້ 2 ລະບົບນີ້ສາມາດເຂົ້າ Login ຜ່ານ Mobile Browser).
23. ຫ້າມຜູ້ໃຊ້ບໍລິການອັບເດດຂໍ້ມູນເລກບັນຊີ, ລະຫັດ ID ຜູ້ໃຊ້ບໍລິການ, ລະຫັດຜ່ານເຂົ້າລະບົບ, ລະຫັດໂອນເງິນຈາກສື່ຫຼອກລວງຕາມລິ້ງເວັບໄຊ, ຂໍ້ຄວາມສັ້ນ ແລະ ສື່ໂຄສະນາອອນລາຍຕ່າງໆ ທີ່ບໍ່ແມ່ນມາຈາກເວັບໄຊຫຼັກຂອງທະນາຄານຮ່ວມພັດທະນາ. ເມື່ອພົບເຫັນກໍລະນີດັ່ງກ່າວຄວນແຈ້ງທະນາຄານຮັບຮູ້.
24. ຜູ້ໃຊ້ບໍລິການຕ້ອງຊຳລະຄ່າທຳນຽມຕາມເງື່ອນໄຂ ແລະ ລະບຽບທີ່ທະນາຄານວາງອອກຕາມແຕ່ລະໄລຍະ.
25. ໃນການໂອນເງິນຫາບັນຊີຜູ້ອື່ນຈະມີການປ້ອງກັນຄວາມປອດໄພໂດຍການຕອບຄຳຖາມຄວາມປອດໄພກ່ອນ (Security Question). ກໍລະນີລູກຄ້າລືມຄຳຖາມຄວາມປອດໄພ ຕ້ອງເຂົ້າມາທະນາຄານເພື່ອຂຽນຟອມຂໍແກ້ໄຂຄຳຖາມຄວາມປອດໄພໃໝ່ ໃນວັນເວລາເຂົ້າການຂອງທະນາຄານ.
26. ຜູ້ໃຊ້ບໍລິການ JDB First ຕ້ອງຮັກສາ ID ຜູ້ນຳໃຊ້, ລະຫັດຜ່ານໃຫ້ເປັນຄວາມລັບສ່ວນຕົວ. ບຸກຄົນທີ່ຮູ້ ID ຜູ້ໃຊ້, ລະຫັດຜ່ານເຂົ້າລະບົບໄດ້ ທະນາຄານຖືວ່າການດຳເນີນທຸລະກຳຕ່າງໆ ແມ່ນຜູ້ໃຊ້ບໍລິການເປັນຜູ້ດຳເນີນການເອງ.
27. ກໍລະນີຜູ້ໃຊ້ບໍລິການສ້າງທຸລະກຳດ້ານການເງິນຜ່ານບໍລິການ JDB First ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ຫຼື ຜິດລະບຽບການຂອງທະນາຄານ. ທະນາຄານຈະດຳເນີນຄະດີກັບຜູ້ໃຊ້ບໍລິການຕາມລະບຽບກົດໝາຍ.
28. ເຫດສຸດວິໄສຕ່າງໆທີ່ເຮັດໃຫ້ທຸລະກຳການເງິນມີບັນຫາເຊັ່ນ:
    - 28.1 ຄວາມບົກຜ່ອງຂອງລະບົບ COMPUTER ແລະ ລະບົບສື່ສານຂອງຜູ້ໃຊ້ບໍລິການຫຼື ເຄືອຂ່າຍຂອງຜູ້ໃຊ້ບໍລິການເອງ.
    - 28.2 ບັນຫາລະບົບຂັດຂ້ອງທາງດ້ານເຕັກນິກຊົ່ວຄາວ.
    - 28.3 ບັນຫາໄພທຳມະຊາດເຊັ່ນ: ໄພນໍ້າຖ້ວມ, ຟ້າຜ່າ, ໄພທຳມະຊາດອື່ນໆ ທີ່ເຮັດໃຫ້ທຸລະກຳການເງິນບໍ່ສາມາດດຳເນີນການໄດ້.
    - 28.4 ບັນຫາທີ່ເກີດຈາກຜູ້ໃຊ້ບໍລິການເອງເຊັ່ນ: ໂອນເງິນຜິດ, ລະບຸເລກບັນຊີຜິດ.
29. ກໍລະນີຂໍ້ມູນທາງບັນຊີຂອງລູກຄ້າຜູ້ທີ່ໃຊ້ JDB First ຖືກເປີດເຜີຍ ແກ່ບຸກຄົນອື່ນເນື່ອງຈາກຜູ້ໃຊ້ບໍລິການເອງ, ຜູ້ໃຊ້ຕ້ອງຮັບຜິດຊອບເອງ.
30. ກໍລະນີຜູ້ໃຊ້ບໍລິການໂອນໄປຜິດບັນຊີປາຍທາງແມ່ນຜູ້ໃຊ້ບໍລິການຕ້ອງທວງນຳປາຍທາງເອງ, ໂດຍທະນາຄານຮ່ວມພັດທະນາຈະເປັນຜູ້ສະໜອງຂໍ້ມູນປາຍທາງດັ່ງກ່າວໃຫ້.
31. ຜູ້ໃຊ້ບໍລິການບໍ່ປະຕິບັດຕາມຂໍ້ຕົກລົງໃນການບໍລິການ ແລະ ເງື່ອນໄຂຕ່າງໆທີ່ກ່ຽວຂ້ອງກັບການບໍລິການ JDB First ຂອງທະນາຄານຮ່ວມພັດທະນາ ເຊິ່ງເປັນສາເຫດໃຫ້ຍຸຕິການໃຊ້ບໍລິການ.
32. ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນ ອັນເນື່ອງມາຈາກຜູ້ໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂການໃຊ້ບໍລິການຂໍ້ 14 ແລະ ຂໍ້ 15 ໂດຍຜູ້ບໍລິການກົດລິ້ງຕ່າງໆທີ່ບໍ່ປອດໄພ ແລະ ອັບເດດຂໍ້ມູນໃຫ້ຜູ້ບໍ່ຫວັງດີທີ່ນຳຄວາມເສຍຫາຍມາໃຫ້ຜູ້ໃຊ້ບໍລິການ.
33. ທະນາຄານຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍຕ່າງໆໃນກໍລະນີລູກຄ້າເຮັດຜິດກົດລະບຽບຂອງການໂອນເງິນໃນລະບົບ JDB First.

34. ຜູ້ໃຊ້ບໍລິການຍິນຍອມຊໍາລະຄ່າທໍານຽມ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ກ່ຽວຂ້ອງກັບບໍລິການນີ້. ຕາມອັດຕາທີ່ທະນາຄານໄດ້ກໍານົດໂດຍຜູ້ໃຊ້ບໍລິການຍິນຍອມໃຫ້ທະນາຄານຫັກເງິນຈາກບັນຊີຫຼັກ ຫຼື ບັນຊີເງິນຝາກອື່ນໆ ຂອງຜູ້ໃຊ້ບໍລິການເພື່ອຊໍາລະຄ່າທໍານຽມ ແລະ ຄ່າໃຊ້ຈ່າຍດັ່ງກ່າວ.

35. ຜູ້ໃຊ້ບໍລິການຍິນຍອມຊໍາລະຄ່າທໍານຽມ ຕາມອັດຕາທີ່ທະນາຄານຮ່ວມພັດທະນາໄດ້ກໍານົດໄວເຊັ່ນ: ລູກຄ້າຂໍອອກລະຫັດໃໝ່, ແລະ ຄ້າງຄ່າທໍານຽມ.

36. ປະເພດບັນຊີທີ່ໃຊ້ຫັກຄ່າທໍານຽມຕ້ອງເປັນ ບັນຊີເງິນຝາກກະແສລາຍວັນ ຫຼື ບັນຊີເງິນຝາກປະຢັດເທົ່ານັ້ນ.

37. ທະນາຄານມີສິດຍົກເລີກການໃຫ້ບໍລິການເວລາໃດກໍໄດ້ ໂດຍບໍ່ແຈ້ງໃຫ້ຜູ້ໃຊ້ບໍລິການຊາບໃນກໍລະນີດັ່ງນີ້:

37.1 ທະນາຄານບໍ່ສາມາດຫັກເງິນຄ່າທໍານຽມບໍລິການລາຍເດືອນຈາກບັນຊີເງິນຝາກຂອງຜູ້ໃຊ້ບໍລິການໄດ້ ແລະ ທະນາຄານຕ້ອງໄດ້ຮຽກເກັບເງິນຄ່າທໍານຽມທີ່ຍັງຄ້າງທັງໝົດນໍາຜູ້ໃຊ້ບໍລິການທັນທີ.

37.2 ຜູ້ໃຊ້ບໍລິການຈະຖືກຢຸດການນໍາໃຊ້ບໍລິການທັນທີ ພາຍຫຼັງທີ່ທະນາຄານໄດ້ກວດພົບວ່າຜູ້ໃຊ້ບໍລິການບໍ່ປະຕິບັດຕາມເງື່ອນໄຂ ແລະ ຂໍ້ກໍານົດທີ່ໄດ້ຕົກລົງກັນຕາມທີ່ທະນາຄານເຫັນສົມຄວນ.

37.3 ຜູ້ໃຊ້ບໍລິການໃສ່ລະຫັດຜິດເກີນ 3 ຄັ້ງ ID ຜູ້ໃຊ້ບໍລິການຈະຖືກລະງັບການນໍາໃຊ້ຊົ່ວຄາວໂດຍອັດຕະໂນມັດ.

| ລ/ດ | ລາຍການຄ່າບໍລິການ | ອັດຕາຄ່າບໍລິການ |
|---|---|---|
| 1 | ສະໝັກລົງທະບຽນ | ບໍ່ເກັບ |
| 2 | ຄ່າທຳນຽມລາຍເດືອນ | |
| | 2.1 ສຳຫຼັບບຸກຄົນ | 5,000 ກີບ/ເດືອນ |
| | 2.2 ສຳຫຼັບນິຕິບຸກຄົນ | 15,000 ກີບ/ເດືອນ |
| 3 | ຄ່າທຳນຽມໂອນເງິນພາຍໃນບັນຊີຕົນເອງ | ບໍ່ເກັບ |
| 4 | ຄ່າທຳນຽມໂອນເງິນລະຫວ່າງບັນຊີພາຍໃນທະນາຄານ JDB | |
| | *ຈຳນວນເງິນໂອນຕໍ່າກວ່າ:* 5,000,000 ກີບ/ຄັ້ງ | ບໍ່ເກັບ |
| | *ຈຳນວນເງິນໂອນຫລາຍກວ່າ:* 5,000,001 ກີບ - 20,000,000 ກີບ/ຄັ້ງ | 2,000ກີບ/10 ບາດ/0.2ໂດລາ/ຄັ້ງ |
| | 20,000,001 ກີບ - 30,000,000 ກີບ/ຄັ້ງ | 3,000ກີບ/15ບາດ/0.3ໂດລາ/ຄັ້ງ |
| | 30,000,001 ກີບ - 40,000,000 ກີບ/ຄັ້ງ | 4,000ກີບ/20ບາດ/0.4ໂດລາ/ຄັ້ງ |
| | 40,000,001 ກີບ - 50,000,000 ກີບ/ຄັ້ງ | 5,000ກີບ/25ບາດ/0.5ໂດລາ/ຄັ້ງ |
| | 50,000,001 ກີບ - 100,000,000 ກີບ/ຄັ້ງ | 6,000ກີບ/30ບາດ/0.6ໂດລາ/ຄັ້ງ |
| | 100,000,001 ກີບ - 500,000,000 ກີບ/ຄັ້ງ | 8,000ກີບ/35ບາດ/0.8ໂດລາ/ຄັ້ງ |
| | **ໝາຍເຫດ:**<br>- ຈຳນວນເງິນໂອນສະກຸນອື່ນແມ່ນທຽບເທົ່າສະກຸນເງິນກີບ<br>- ສາມາດໂອນເງິນໄດ້ພຽງແຕ່ສະກຸນເງິນດຽວກັນ : LAK-LAK;USD-USD;THB-THB | |
| 5 | ໂອນເງິນຕ່າງທະນາຄານພາຍໃນປະເທດ | |
| | *ຈຳນວນເງິນໂອນຕໍ່າກວ່າ:* 200,000,000 ກີບ | 15,000 ກີບ/ລາຍການ |
| | *ຈຳນວນເງິນໂອນຫຼາຍກວ່າ:* 200,000,001 ກີບ - 500,000,000 ກີບ | 20,000 ກີບ/ລາຍການ |
| | **ໝາຍເຫດ:**<br>- ຈຳນວນເງິນໂອນສະກຸນອື່ນແມ່ນທຽບເທົ່າສະກຸນເງິນກີບ<br>- ສາມາດໂອນເງິນໄດ້ພຽງແຕ່ສະກຸນເງິນ LAK-LAK<br>- ສາມາດໂອນເງິນໄດ້ຕັ້ງແຕ່ເວລາ **9:00** ຫາ **14:30** ວັນຈັນເຖິງວັນສຸກ.<br>ຖ້າລູກຄ້າໂອນເງິນຫຼັງຈາກ **14:30** ລະບົບຈະແຈ້ງລູກຄ້າວ່າລາຍການໂອນຈະເຮັດວຽກໃນມື້ຕໍ່ໄປ | |
| 6 | ຄ່າທຳນຽມອອກລະຫັດໃໝ່ | 10,000 ກີບ/ຄັ້ງ |
| 7 | ຄ່າທຳນຽມຕັ້ງຄ່າ Security Question ໃໝ່ | 5,000 ກີບ/ຄັ້ງ |
| 8 | ຊຳລະຄ່າສາທາລະນຸປະໂພກ (Bill Payment) | 5,000 ກີບ/ລາຍການຫຼືເກັບຈາກຜູ້ໃຫ້ບໍລິການ |
| 9 | ກວດເບິ່ງລາຍການເຄື່ອນໄຫວບັນຊີ (Account Statement) | ບໍ່ເກັບ |
| 10 | ເບີກຈ່າຍເງິນເດືອນ<br>- ສາມາດອັບໂຫລດໄຟລເງິນເດືອນໄດ້ພຽງແຕ່ສະກຸນເງິນດຽວກັນ LAK-LAK;USD-USD;THB-THB<br>- ສາມາດອັບໂຫລດໄຟລເງິນເດືອນໄດ້ຕັ້ງແຕ່ເວລາ **8:30** ຫາ **15:30** ວັນຈັນເຖິງວັນສຸກ | 2,000 ກີບ; 0.25 ໂດລາ; 10 ບາດ/ບັນຊີຜູ້ຮັບເງິນ |